

# ມາດຖານຕ່ຳສຸດກ່ຽວກັບບົດບາດ ຍິງ-ຊາຍ ແລະ ຄວາມຫຼາກຫຼາຍ

## ໃນການຫລຸດຜ່ອນຄວາມສ່ຽງດ້ານໄພພິບັດ

### ການເຄົາລົບຕໍ່ກຽດສັກສີ

- ລະບົບຂອງການຍົກຍ້າຍລວມເຖິງມາດຕະການສະເພາະສຳລັບແມ່ຍິງ ແລະ ເດັກຍິງ ເພື່ອໃຫ້ສອດຄ່ອງກັບບດບາດຍິງ - ຊາຍ, ຮີດຄອງປະເພນີ ແລະ ວັດທະນະທຳ;
- ລະບົບເຕືອນໄພແຕ່ລ່ວງໜ້າຂອງຊຸມຊົນທີ່ກ່ຽວຂ້ອງ ແມ່ນພິວພັນກັບ ບົດບາດຍິງ - ຊາຍ, ເຊິ່ງລວມມີກຸ່ມຄົນດ້ອຍໂອກາດ, ເພື່ອຮັບປະກັນໃຫ້ຂັ້ນ ຕອນການເຕືອນໄພລ່ວງໜ້າ ໃຫ້ເປັນໄປໃນທາງທີ່ດີ ຕໍ່ຄວາມຕ້ອງການຂອງ ທຸກເພດທຸກໄວ, ເຊິ່ງລວມມີຄວາມເປັນສ່ວນຕົວ ແລະ ຄວາມປອດໄພໃນ ບ່ອນພັກເຊົາຂອງສູນອົບພະຍົບທີ່ຢູ່ລວມໝູ່.

### ການເຂົ້າເຖິງ

- ເພື່ອຮັບປະກັນໃຫ້ຜູ້ມີຄວາມສ່ຽງຕໍ່ການເກີດໄພພິບັດໄດ້ເຂົ້າເຖິງເງື່ອນໄຂການຄັດເລືອກ ແລະ ການໃຫ້ບຸລິມະສິດໃນການຮັບຜົນປະໂຫຍດ ໃນການເຂົ້າເຖິງກິດຈະກຳຫລຸດຜ່ອນຄວາມສ່ຽງໄພພິບັດໄດ້ ຖືກແຈ້ງໃຫ້ຮູ້ໂດຍການວິເຄາະບົດບາດຍິງ - ຊາຍ ແລະ ຄວາມຫຼາກຫຼາຍ*;
- ເພດຍິງ - ຊາຍ, ໃນທຸກໄວ ເຊິ່ງລວມທັງກຸ່ມຄົນດ້ອຍໂອກາດ ຕ້ອງໄດ້ເຂົ້າເຖິງ ການຝຶກອົບຮົມ ລະບົບເຕື່ອນໄພແຕ່ລ່ວງໜ້າຢ່າງສະເໝີພາບກັນ;

### ການມີສ່ວນຮ່ວມ

- ເພດຍິງ - ຊາຍ ທຸກໄວ ລວມທັງກຸ່ມຄົນທີ່ດ້ອຍໂອກາດ ຕ້ອງໄດ້ຮັບການໃຫ້ ຄຳປຶກສາແບບມີສ່ວນຮ່ວມໃນການປະເມີນຄວາມສ່ຽງລວມທັງການຫ້າງຫາ ກະກຽມຕອບໂຕ້ໄພພິບັດໃນທຸກລະດັບ, ເຊິ່ງລວມມີລະບົບເຕືອນໄພລ່ວງໜ້າ, ການສຶກສາ, ການສື່ສານ, ຂໍ້ມູນຂ່າວສານ ແລະ ການສ້າງເຄື່ອຂ່າຍ. ຖ້າມີຄວາມຈຳເປັນ ຈະຕ້ອງໄດ້ແຍກກຸ່ມສົນທະນາທີ່ມີເພດດຽວ ເຊິ່ງມີຜູ້ໃຫ້ຄວາມສະດວກເປັນເພດດຽວກັນ;
- ຜູ່ຕາງໜ້າໃຫ້ແກ່ຍິງ - ຊາຍ ຕ້ອງມາຈາກຫຼາຍພາກສ່ວນ ແລະ ມີຊັດສ່ວນທີ່ ສະເໝີພາບກັນເຂົ້າໃນຂະບວນການການຕັດສິນໃຈຂອງກິດຈະກຳຫລຸດຜ່ອນ ຄວາມສ່ຽງດ້ານໄພພິບັດ ແລະກິດຈະກຳໃນການຫ້າງຫາກະກຽມໄພພິບັດ ຊຸມຊົນ ຕ້ອງໄດ້ຮັບການສົ່ງເສີມເພື່ອຮັບປະກັນໃຫ້ມີລັກສະນະດ້ານສັງຄົມ,ວັດທະນະທຳ ແລະ ເສດຖະກິດ ສຳລັບການຫລຸດຜ່ອນຄວາມສ່ຽງທຸກກຸ່ມຄົນແລະທຸກກຸ່ມຊົນເຜົ່າຢູ່ໃນຊຸມຊົນໄດ້ຮັບການແກ້ໄຂ;

### ຄວາມປອດໄພ

- ຄວາມກັງວົນ ແລະ ຄວາມຕ້ອງການຂອງເພດຍິງ - ຊາຍ ແລະ ທຸກກຸ່ມອາຍ ລວມທັງກຸ່ມຄົນດ້ອຍໂອກາດ ແມ່ນມີຢູ່ໃນການປະເມີນຄວາມສ່ຽງຂອງຊຸມ ຊົນທີ່ໄດ້ຈັດຕັ້ງປະຕິບັດທີ່ກ່ຽວຂ້ອງກັບໄພພິບັດທາງທຳມະຊາດ
- ໄດ້ມີການພິຈາລະນາກ່ຽວກັບການເຂົ້າເຖິງ, ການເຂົ້າໄປຢູ່ໃນ ແລະ ການເຄື່ອນຍ້າຍໄປມາໃນສູນອົບພະຍົບ: ໂດຍສະເພາະແມ່ນສຳລັບຜູ້ທີ່ມີຄວາມຫຍຸ້ງຍາກດ້ານການເຄື່ອນໄຫວໄປມາ ຊຶ່ງລວມທັງຜູ້ສູງອາຍຸ, ຄົນພິການແມ່ຍິງຖືພາ ແລະ ອື່ນໆ.
- ການປະຕິບັດສະເພາະທີ່ມີປະຕິບັດເພື່ອປ້ອງກັນບໍ່ໃຫ້ຄວາມສ່ຽງຂອງການ ການທາລຸນທາງເພດ (GBV) ພາຍໃນສູນອົບພະຍົບໄດ້. ຍົກຕົວຢ່າງ, ສະຖານທີ່, ການແບ່ງປັນສາລັບຄວາມເປັນສ່ວນຕົວ, ສຸຂາພິບານທີ່ແຍກ ຕ່າງຫາກສຳລັບຜູ້ຍິງແລະຜູ້ຊາຍ.

*ການວິເຄາະບົດບາດຍິງ - ຊາຍ ແລະ ຄວາມຫລາກຫລາຍຄວນຈະໄດ້ຮັບການແຈ້ງໃຫ້ດຳເນີນໂຄງການສຸກຂະພາບສຸກເສີນ ແລະ ໂຄງການໄພພິບັດສຸກເສີນ ແລະ ລວມທັງໂຄງການທີ່ບໍ່ແມ່ນພາວະສຸກເສີນ, ມັນຄວນກ່ຽວຂ້ອງກັບບົດບາດຍິງ - ຊາຍ ຢູ່ໃນຊຸມຊົນ, ລວມເຖິງພາລະບົດບາດຂອງເຂົາເຈົ້າ, ຄວາມຮັບຜິດຊອບ, ການເຂົ້າເຖິງ, ຂໍ້ຈາກັດ ແລະ ການຄວບຄຸມດ້ານຊັບພະຍາກອນເຊັ່ນ ດຽວກັນກັບຄວາມຕ້ອງການສະເພາະໃດໜຶ່ງ, ບູລິມາສິດ ແລະ ຄວາມສາມາດຂອງຊຸມຊົນຂອງກຸ່ມຄົນສູງອາຍຸ, ຄົນພິການ ແລະ ຊົນເຜົ່າ.


International Federation of Red Cross and Red Crescent Societies
www.ifrc.org Saving lives, changing minds.

ສະພາກາແດງລາວ CROIX-ROUGE LAO

CROIX-ROUGE CANADIENNE CANADIAN RED CROSS

Canada